**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 080 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 30 AUG 2024

# ແຈ້ງການ

ເຖິງ: - ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ

- ທ່ານ ຄະນະບໍດີ ຄະນະແພດສາດ, ມວສ

- ທ່ານ ອຳນວຍການວິທະຍາຄານການແພດກອງທັບ

ເລື່ອງ: ການກະກຽມ ແລະ ຈັດຕັ້ງສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 4

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສຳລັບວິຊາຊີບທ່ານໝໍ ເລກທີ 078/ສວສ, ລົງວັນທີ 22 ສິງຫາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສຳລັບທ່ານໝໍ ເລກທີ 079/ສວສ, ລົງວັນທີ 22 ສິງຫາ 2024;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາ ລະນະສຸກຈະຈັດການສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 4, ຊຶ່ງຈະຈັດຂຶ້ນວັນທີ 24 ຫາ 25 ຕຸລາ 2024 ທີ່ ວິທະຍາເຂດດົງໂດສີ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ. ເພື່ອເຮັດໃຫ້ການກະກຽມ ແລະ ຈັດຕັ້ງປະ ຕິບັດສອບເສັງຄັ້ງນີ້ ດຳເນີນໄປຕາມແຜນການ ແລະ ໄດ້ຮັບຜົນດີຈຶ່ງຂໍຄວາມຮ່ວມມືຊ່ວຍເຫຼືອມາຍັງທ່ານເພື່ອ:

1. ກະກຽມສະຖານທີ່ສອບເສັງ: ຫ້ອງສຳລັບກຳມະການຮັບຜິດຊອບການສອບເສັງ ແລະ ຫ້ອງສຳລັບສອບເສັງ ສຳລັບພາກປະຕິບັດຕົວຈິງ (OSCEs) ແລະ ພາກທິດສະດີ (MCQs) ທີ່ ວິທະຍາເຂດດົງໂດສີ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ;
2. ແຈ້ງໃຫ້ທ່ານໝໍຈົບໃໝ່ສົກປີ 2022-2023, ຜູ້ບໍ່ມາສອບເສັງ ແລະ ຜູ້ສອບເສັງບໍ່ຜ່ານໃນຄັ້ງທີ່ຜ່ານມາ ໃຫ້ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງຕາມວັນເວລາ ແລະ ສະຖານທີ່ ທີ່ກຳນົດໄວ້;
3. ສະໝັກສອບເສັງດ້ວຍການດາວໂຫຼດແບບຟອມຄຳຮ້ອງຜ່ານທາງອອນລາຍໄດ້ທີ່: https://hpc.gov.la/la/doctor/examination ຫຼື ມາພົບເອົາແບບຟອມສະໝັກໄດ້ ທີ່ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 ໃນຂອບເຂດກະຊວງສາ ທາລະນະສຸກຕຶກໃໝ່);
4. ສົ່ງຟອມຄຳຮ້ອງສະໝັກສອບເສັງ ທີ່ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລີ້ມແຕ່ວັນທີ 02 ກັນຍາ 2024 ຫາ 04 ຕຸລາ 2024;

5. ໃຫ້ມາຮັບເອົາບັດເຂົ້າຫ້ອງສອບເສັງແຕ່ວັນທີ 07 ຫາ 11 ຕຸລາ 2024 ທີ່ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ;
6. ຄ່າລົງທະບຽນສະໝັກສອບເສັງແມ່ນ 350,000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນທີ່ສົ່ງຟອມຄຳຮ້ອງສະໝັກສອບເສັງ.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທຳມະວົງ

<u>ຕິດຕໍ່ປະສານງານ ໂທ ແລະ ວອດແອັບ:</u>

ນ. ວົງເດືອນ ສະຫວັນສັກ 9662 4956

ດຣ ເລກ ສີດາວົງ 5500 8875

ທ. ບຸນປະສິດ ຄຳກອງ 5986 8071